- <u>ໝາຍເຫດ:</u> ຫ້ອງການໃຫ້ຄຳປຶກສາທາງດ້ານກົດໝາຍບໍ່ສາມາດໃຫ້ຄຳປຶກສາໃນບັນຫາທີ່ກ່ຽວຂ້ອງກັບຂອບເຂດສິດອຳນາດຂອງສານຕ່າງປະເທດ.

## 3. ປະເພດການບໍລິການ

ຫ້ອງການໃຫ້ຄຳປຶກສາ ສາມາດໃຫ້ການບໍລິການແກ່ລູກຄວາມ ດັ່ງນີ້:

- ໃຫ້ຄຳປຶກສາພື້ນຖານທາງດ້ານກົດໝາຍ ແລະ ຄຳແນະນຳທີ່ກ່ຽວຂ້ອງກັບກົດໝາຍ, ສິດ ແລະ ພັນທະຂອງຄູ່ຄວາມພາຍໃຕ້ກົດໝາຍ;
- ແນະນຳທາງເລືອກໃຫ້ແກ່ລູກຄວາມເພື່ອແກ້ໄຂບັນຫາຂອງຕົນ;
- ອະທິບາຍສັນຍາ, ເອກະສານທາງດ້ານກົດໝາຍ ແລະ ຂະບວນການທາງດ້ານກົດໝາຍ;
- ຊ່ວຍເຫຼືອໃນການຮ່າງເອກະສານທີ່ນຳໃຊ້ໃນຂະບວນການທາງດ້ານກົດໝາຍ (ຕົວຢ່າງ: ຄຳຮ້ອງຟ້ອງຕໍ່ສານ)
- ແນະນຳ ຫຼື ສົ່ງຕໍ່ໃຫ້ພາກສ່ວນທີ່ກ່ຽວຂ້ອງ;




## ຫ້ອງການໃຫ້ຄຳປຶກສາໃຫ້ບໍລິການໂດຍບໍ່ຄິດຄ່າ



## ແຜນທີ່: ຫ້ອງການໃຫ້ຄຳປຶກສາທາງດ້ານກົດໝາຍ ສູນບໍລິການກົດໝາຍເພື່ອປະຊາຊົນ




### ວັນເວລາ ເປີດ
### ບໍລິການໃຫ້ຄຳປຶກສາທາງດ້ານກົດໝາຍ

ເປີດ ວັນຈັນ ຫາ ວັນສຸກ

ເວລາ 08:00 ໂມງ ຫາ 16:00 ໂມງ



# ຫ້ອງການໃຫ້ຄຳປຶກສາທາງດ້ານກົດໝາຍ ສູນບໍລິການກົດໝາຍເພື່ອປະຊາຊົນ




ສະຖານຕັ້ງຢູ່ທີ່: ຖະໜົນມິດຕະພາບລາວ-ໄທ, ບ້ານ ດອນນົກຂຸ້ມ,
ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ,
ຕູ້ ປ.ນ 822 ນະຄອນຫຼວງວຽງຈັນ

Clinical Legal Education Program in Lao PDR

FLPCLE Maps

030 5668 539

## ປະຫວັດຄວາມເປັນມາ

ສູນບໍລິການກົດໝາຍເພື່ອປະຊາຊົນ ແມ່ນການຈັດຕັ້ງໜຶ່ງທີ່ຂຶ້ນກັບ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ມີຊື່ເປັນພາສາອັງກິດວ່າ: Clinical Legal Education (CLE), ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງຂຶ້ນໃນປີ  2007 ໂດຍເມື່ອ ກ່ອນເປັນພຽງແຕ່ໜ່ວຍງານໜຶ່ງຂອງພາກວິຊານິຕິສາດ ເອີ້ນວ່າ: ໜ່ວຍງານກົດໝາຍເພື່ອປະຊາຊົນ. ຕົກມາຮອດປີ 2010 ໄດ້ປ່ຽນຊື່ມາເປັນສູນບໍລິການກົດໝາຍເພື່ອປະຊາຊົນ ຈົນຮອດປັດຈຸບັນ.

## ເປົ້າໝາຍຂອງຫ້ອງການໃຫ້ຄຳປຶກສາທາງດ້ານກົດໝາຍ

1. ເພື່ອສົ່ງເສີມໂອກາດທາງການສຶກສາໃຫ້ນັກສຶກສາໄດ້ຮັບການຮຽນຮູ້ໂດຍຜ່ານການສັງເກດ ຫຼື ປະສົບ ການຕົວຈິງ, ສົ່ງເສີມການເປັນຕົວແທນຜູ້ມາຂໍຄຳປຶກສາເຊິ່ງອະນຸຍາດໃຫ້ນັກສຶກສາໄດ້ຮຽນຮູ້, ນຳໃຊ້ທັກສະ ແລະ ການປະຕິບັດຕົວຈິງ;
2. ເພື່ອຊ່ວຍພັດທະນານັກສຶກສາດ້ວຍກັນເອງໃນການບໍລິການກົດໝາຍເພື່ອສັງຄົມໃຫ້ກັບຜູ້ດ້ອຍໂອກາດ ແລະ ຊຸມຊົນທີ່ບໍ່ສາມາດເຂົ້າເຖິງຂະບວນການຍຸຕິທຳ;
3. ເພື່ອສົ່ງເສີມສັງຄົມໂດຍຜ່ານການພັດທະນາທາງດ້ານຄວາມຮູ້ໃຫ້ມີຄວາມຊຳນານງານ ແລະ ມີຄວາມຮັບຜິດຊອບສູງ;
4. ເພື່ອເຮັດໃຫ້ຄູ-ອາຈານສອນກົດໝາຍໄດ້ຮັບການພັດທະນາດ້ານທັກສະດ້ານທິດສະດີຄຽງຄູ່ກັບພາກປະຕິບັດຕົວຈິງ;

## ຂອບເຂດຂອງການໃຫ້ຄຳປຶກສາ

### I. ເງື່ອນໄຂຂອງຜູ້ມາຂໍຄຳປຶກສາ/ລູກຄວາມ

ຫ້ອງການໃຫ້ຄຳປຶກສາ ມີເປົ້າໝາຍໃນການເປີດໂອກາດໃຫ້ຜູ້ທີ່ມີເງື່ອນໄຂດັ່ງນີ້:



1. ເປັນຜູ້ທຸກຍາກ (ນຳໃຊ້ເງື່ອນໄຂດຽວກັນໃນການກຳນົດຜູ້ທີ່ທຸກຍາກ, ຂາດເຂີນ ຫຼື ມີບັນຫາທາງດ້ານການເງິນ ຊຶ່ງກຳນົດໄວ້ໃນ ດຳລັດວ່າດ້ວຍການຊ່ວຍເຫຼືອທາງດ້ານກົດໝາຍ);
2. ເປັນຄະດີທີ່ບໍ່ທັນໄດ້ຢູ່ໃນຂະບວນການພິຈາລະນາຂອງສານ;
3. ໃນບາງກໍລະນີຫ້ອງການໃຫ້ຄຳປຶກສາອາດຈະໃຫ້ຄຳປຶກສາທາງດ້ານກົດໝາຍແກ່ຜູ້ທີ່ມີລາຍໄດ້ສູງກວ່າທີ່ກຳນົດໄວ້ໄດ້ໂດຍຂຶ້ນກັບການພິຈາລະນາຂອງຄະນະຮັບຜິດຊອບຂອງຫ້ອງການໃຫ້ຄຳປຶກສາ.



ພາບຈຳລອງນັກສຶກສາຮັບຜູ້ມາຂໍຄຳປຶກສາທາງດ້ານກົດໝາຍ

### II. ຂົງເຂດການໃຫ້ບໍລິການ

ຫ້ອງການໃຫ້ຄຳປຶກສາ ສາມາດໃຫ້ບໍລິການໃນຂົງເຂດກົດໝາຍທີ່ຢູ່ພາຍໃຕ້ຂອບເຂດສິດອຳນາດຂອງສານແຫ່ງ ສປປ ລາວ, ຂົງເຂດ ຫຼື ວິຊາສະເພາະທີ່ອາຈານຊີ້ນຳຊ່ຽວຊານ ຫຼື ທີ່ທະນາຍຄວາມ ມີຄວາມຊ່ຽວຊານສະເພາະດ້ານ



ແຮງງານ



ມູນມໍຣະດົກ



ລັກຊັບສິ່ງຂອງ



ສໍ້ໂກງຊັບ

ເຖິງຢ່າງໃດກໍ່ຕາມຫ້ອງການໃຫ້ຄຳປຶກສາ ແມ່ນສ່ວນໜຶ່ງ ແລະ ຂຶ້ນກັບມະຫາວິທະຍາໄລແຫ່ງຊາດ ເຊິ່ງເປັນສະຖາບັນຂອງລັດ ສະນັ້ນ ຫ້ອງການໃຫ້ຄຳປຶກສາຈຶ່ງບໍ່ສາມາດໃຫ້ຄຳປຶກສາແກ່ລູກຄວາມໃນຄະດີທີ່ກ່ຽວຂ້ອງກັບມະຫາວິທະຍາໄລແຫ່ງຊາດ, ອົງການຈັດຕັ້ງຂອງລັດ (ຕົວຢ່າງ: ຂໍ້ຂັດແຍ່ງດ້ານທີດິນ ທີ່ຜູ້ມາຂໍຄຳປຶກສາ/ລູກຄວາມມີບັນຫາກ່ຽວກັບທີ່ດິນຂອງຕົນເອງ ທີ່ຖືກເປັນເນື້ອທີ່ສຳປະທານ)